0

สาทาละนะลัด ปะຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ກະຊວງສາທາລະນະສຸກ

ຫ້ອງການກະຊວງສາທາລະນະສຸກ

ຄະນະຮັບຜິດຊອບວຽກງານຮັກສາສຸຂະພາບ

ໂທ: 214013-14ແຟັກ: 214015

ເລກທີ 334 ............../15.ຫກ

ນະຄອນຫລວງວຽງຈັນ,ວັນທີ 19 NOV 2015

**ແຈ້ງການ**

**ເຖິງ : ທ່ານ ຫົວໜ້າອຳນວຍການໂຮງແຮມ, ຮ້ານອາຫານ, ສະຖານທີ່ຂາຍອາຫານ ບໍລິສັດສົ່ງອອກ-ນຳເຂົ້າ ແລະຫ້າງຮ້ານຂາຍຍົກຂາຍຍ່ອຍ, ໂຮງງານຜະລິດ ອາຫານ, ນ້ຳດື່ມ ແລະນ້ຳກ້ອນ,**

ເລື້ອງ: ການຮັກສາຄວາມສະອາດໃນການຜະລິດຈຳໜ່າຍ ແລະບໍລິການອາຫານໃຫ້ມີ ຄວາມຮັບປະກັນຄຸນນະພາບແລະຄວາມປອດໄພ

- ອີງຕາມ: ມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 08/ກມສພ, ລົງ ວັນທີ 25 ຕຸລາ 2012;
- ອີງຕາມ: ມະຕິຕົກລົງຂອງທ່ານລັດຖະມົນຕີວ່າການກະຊວງສາທາລະນະສຸກ ສະບັບ ເລກທີ 3044ສທ, ລົງວັນທີ 11 ພະຈິກ 2015 ວ່າດ້ວຍການແຕ່ງຕັ້ງຄະນະ ຮັບຜິດຊອບວຽກງານຮັກສາສຸຂະພາບ ເພື່ອກະກຽມສະເຫຼີມສະຫຼອງສອງວັນ ປະຫວັດສາດໃນປີ 2015 (ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວຄົບຮອບ 60ປີ ແລະ ວັນຊາດຄົບຮອບ40 ປີ).

ເພື່ອຮັບປະກັນໄດ້ການຮັບປະກັນການຜະລິດ, ຈຳໜ່າຍ, ບໍລິການອາຫານປອດໄພໃຫ້ແກ່ ປະຊາຊົນແລະບັນດາແຂກທີ່ເຂົ້າຮ່ວມງານສະເຫຼີມສະຫຼອງວັນຊາດຂອງສປປລາວ ຄົບຮອບ 40, ກະຊວງສາທາລະນະສຸກໃນນາມຄະນະຮັບຜິດຊອບຮັກສາສຸຂະພາບ ຂໍແຈ້ງມາຍັງທ່ານ ບັນດາ ໂຮງແຮມ, ຮ້ານອາຫານ, ສະຖານທີ່ຂາຍອາຫານບໍລິສັດສົ່ງອອກ-ນຳເຂົ້າ ແລະຫ້າງຮ້ານຂາຍຍົກ ຂາຍຍ່ອຍ,ໂຮງງານຜະລິດອາຫານ, ນ້ຳດື່ມ ແລະນ້ຳກ້ອນທີ່ຢູ່ໃນເຂດນະຄອນຫຼວງວຽງຈັນ ຈົ່ງ ເອົາໃຈໃສ່ໃນການຮັບປະກັນຄຸນນະພາບແລະຄວາມປອດໄພຂອງອາຫານ ໂດຍການປະຕິບັດດັ່ງລຸ່ມ ນີ້:

1. ຮັກສາຄວາມສະອາດສະຖານທີ່ ຜະລິດ, ປຸງແຕ່ງ, ຈຳໜ່າຍ ແລະ ບໍລິການອາຫານ -ຮ້ານອາຫານຕ່າງໆ, ອາຫານທີ່ຂາຍຕາມແຄມທາງໂດຍສະເພາະບໍລິເວນຈັດງານສະເຫຼີມສະຫລອງ

2. ຜະລິດອາຫານໃຫ້ຖືກສຸຂະລັກສະນະ,ເລືອກຊື້ວັດຖຸດິບທີ່ສະອາດປອດໄພ, ອາຫານທີ່ບໍ່ໝົດອາຍຸ ແລະ ໄດ້ຜ່ານການກວດກາຄຸນນະພາບແລ້ວ

3. ຮັກສາອະນາໄມສ່ວນບຸກຄົນທີ່ຜະລິດແລະບໍລິການອາຫານ, ເຄື່ອງດື່ມ, ນ້ຳແລະນ້ຳກ້ອນ

4. ເຈົ້າໜ້າທີ່ກວດກາອາຫານແລະຢາ ແລະສາທາລະນະສຸກຈະລົງກວດກາຕິດຕາມສະຖານທີ່ຜະລິດ,ຈຳໜ່າຍ,ບໍລິການອາຫານດັ່ງກ່າວນີ້ ແລະຖ້າພົບອາຫານແລະເຄື່ອງດື່ມມີການປົນເປື້ອນ, ໝົດອາຍຸ ຈະໄດ້ປະຕິບັດມາດຕະການຕາມຄວາມເໝາະສົມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດດ້ວຍ.

ຮ ຫົວໜ້າຫ້ອງການກະຊວງສາທາລະນະສຸກ

ຄະນະກຳມະການແພດ ແລະ ສຸຂະພາບ

ສົມຈິດ ຜາວິໄລ

Somchith PHAVILAY